# ປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳການເບິ່ງແຍ່ງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ

ວິນັດ ພົມມະກອນ[1], ພອນສະຫວັນ ສູນດາລາ[1], ວໍລະສັກ ພູນສີຣິ[1], ຈອນນີ ສີສູນທອນ[2], ອຳໄພວັນ ທອມສະຫວັດ[1], ສຸລິໂຍ ສຸວັງ[1], ມະນີວອນ ພັນທະວົງ[1]

1. ຄະນະທັນຕະແພດສາດ, ມະຫາວິທະຍາໄລ ວິທະຍາສາດ, ສຸຂະພາບ, ນະຄອນຫຼວງວຽງຈັນ, ສປປ ລາວ
2. ຫ້ອງການບໍລິຫານ, ມະຫາວິທະຍາໄລ ວິທະຍາສາດ, ສຸຂະພາບ, ນະຄອນຫຼວງວຽງຈັນ, ສປປ ລາວ

ໄດ້ຮັບຕົ້ນສະບັບ ທີ 12 ພະຈິກ 2023, ໄດ້ຮັບບົດທີ່ກວດແກ້ຄືນ ທີ 9 ກັນຍາ 2024, ເຫັນດີໃຫ້ຈັດພິມ 15 ຕຸລາ 2024

## ບົດຄັດຫຍໍ້

**ຄວາມເປັນມາ ແລະ ຄວາມສຳຄັນ**: ການເກີດເປັນພະຍາດແຂ້ວແມງຂອງເດັກ10 -12ປີ ເປັນບັນຫາທີ່ສຳຄັນ ແລະ ຍັງບໍ່ມີການສຳຫຼວດວິໃຈພຽງພໍ ນັບຕັ້ງແຕ່ໂຄງການຂອງທັນຕະກຳໂຮງຮຽນຂອງຄະນະທັນຕະແພດສາດລົງປະຕິບັດງານມາແລ້ວຫຼາຍປີ ທີມງານພາກວິຊາທັນຕະກຳເດັກມີຄວາມສົນໃຈ ສຶກສາປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳການເບິ່ງແຍ່ງສຸຂະພາບປາກ - ແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປີ 5.

**ວິທີວິດທະຍາ:** ການຄົ້ນຄ້ວາຄັ້ງນີ້ເປັນການວິເຄາະແບບຕັດຂວາງ (Analytical cross-sectional study) ໂດຍການສຳພາດຜູ້ປົກຄອງເດັກນັກຮຽນ, ແບບຟອມສຳພາດນັກຮຽນ ແລະ ແບບຟອມກວດຜົ້ງປາກເດັກນັກຮຽນ, ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາໂດຍນຳແນວຄິດ precede framework ມາປັບປຸງນຳໃຊ້ ໃນການສຶກສາຄັ້ງນີ້, ປະຊາກອນທີ່ເຂົ້າຮ່ວມການສຶກສາຄັ້ງນີ້ແມ່ນນັກຮຽນທີ່ກຳລັງຮຽນຊັ້ນປະຖົມສຶກສາປີທີ່ 5 ໂຮງຮຽນປະຖົມສົມບຸນ ໂສກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ.ປະຈຳສົກຮຽນ 2022-2023, ຈຳນວນ 72 ຄົນ.

**ຜົນການສຶກສາ:** ອັດຕາການເກີດເປັນພະຍາດແຂ້ວແມງໃນແຂ້ວຖາວອນ ຈຳນວນ 72 ຄົນ: ບໍ່ພົບແຂ້ວເປັນແມງ ຈຳນວນ 29 ຄົນ (40.3%), ມີເພດຊາຍທີ່ບໍ່ເປັນແຂ້ວແມງສູງກວ່າເພດຍິງແມ່ນ 62.1% ແລະ ພົບແຂ້ວເປັນແມງຈຳນວນ 43 ຄົນ (59.7%), ມີເພດຍິ່ງທີ່ເປັນແມງສູງກວ່າເພດຊາຍ 58.1%. ພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງໃນພາບລວມຢູ່ລະດັບປານກາງ (2.79±0.55), ຄວາມຮູ້, ຄວາມຮັບຮູ້ກ່ຽວກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ, ການເຂົ້າເຖິງສະຖານການບໍລິການດ້ານທັນຕະກຳ, ການຮັບຮູ້ຂໍ້ມູນຂ່າວສານພະຍາດແຂ້ວແມງ ແລະ ການສະໜັບສະໜຸນທາງດ້ານສັງຄົມດ້ານການປ້ອງກັນພະຍາດແຂ້ວແມງ ມີຄວາມສຳພັນທາງບວກກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວຂອງນັກຮຽນ (p-value = 0.01).

**ສະຫຼຸບ ແລະ ຂໍ້ສະເໜີແນະ:** ອັດຕາການເກີດເປັນພະຍາດແຂ້ວແມງຂອງນັກຮຽນມີ 59.5%, ຖືວ່າຍັງສູງຫຼາຍ ຕ້ອງໄດ້ເອົາໃຈໃສ່ໃຫ້ສຸຂະສຶກສາທາງດ້ານທັນຕະກຳໃຫ້ຫຼາຍໆດ້ານ ແລະ ເລີ່ມແຕ່ຫ້ອງປໍ 1 ຂຶ້ນໄປ ເພື່ອໃຫ້ນັກຮຽນຮູ້ ແລະ ເຂົ້າໃຈ ນຳໄປໃຊ້ເພື່ອປ້ອງກັນພະຍາດແຂ້ວແມງ.

**ຄຳສັບຫຼັກ:** ພຶດຕິກຳ, ແຂ້ວແມງ, ການປ້ອງກັນ

***ຕິດຕໍ່ຜູ້ຂຽນ:** ວິນັດ ພົມມະກອນ, ໂທລະສັບ: +85620 7771 2621, ອີເມລ: phvinath@gmail.com

## ບົດນຳ

ເດັກນັກຮຽນໃນຊ່ວງໄລຍະຮຽນຊັ້ນປະຖົມສຶກສາ ເປັນກຸ່ມໄວທີ່ສຳຄັນໃນການສົ່ງເສີມທັນຕະສຸຂະພາບເພື່ອປ້ອງກັນການເກີດມີພະຍາດແຂ້ວແມງ ເພາະພະຍາດແຂ້ວແມງເປັນພະຍາດເລີ່ມພົບຕັ້ງແຕ່ໄວເລີ່ມຕົ້ນຂອງຊີວິດຈົນເຖິງໄວຜູ້ໃຫຍ່, ການມີສຸຂະພາບແຂ້ວທີ່ບໍ່ດີ ມັນສົ່ງຜົນກະທົບໃນວົງກ້ວາງເຊັ່ນ: ການດຳລົງຊີວິດ, ເສດຖະກິດຄອບຄົວ ແລະ ສຸຂະພາບທົ່ວໄປຂອງເດັກ, ຖ້າເດັກມີພະຍາດແຂ້ວແມງຫຼາຍ ເດັກບໍ່ສາມາດຮັບປະທານອາຫານໄດ້ດີຕາມລັກໂພສະນາການ, ເຮັດໃຫ້ເດັກມັກກິນອາຫານປະເພດເຫຼວ ແລະ ຫວານ, ການເຈັບປວດແຂ້ວຈາກແຂ້ວແມງເປັນອຸປະສັກຕໍ່ການນອນຫຼັບ, ການຈະເລີນເຕີບໂຕຂອງເດັກຕະຫຼອດຮອດການຮຽນຮູ້, ສະພາບຈິດໃຈ ແລະ ຄວາມໝັ້ນໃຈຂອງຕົ້ນເອງ ເນື່ອງຈາກມີແຂ້ວແມງ ພ້ອມມີກິ່ນປາກ. ການສຳຫຼວດຂອງສີວິໄຊ ພົມມະທາໄຊ (ຄສ 2014) ອັດຕາການເກີດເປັນພະຍາດແຂ້ວແມງໃນເດັກນັກຮຽນ 88.1%, ການສຶກສາຂອງສິນທິລາດ ປີລາກຸນ (ຄສ 2017) ອັດຕາການເກີດເປັນພະຍາດແຂ້ວແມງຂອງເດັກນັກຮຽນ ມີຄ່າສະເລ່ຍແຂ້ວແມງ 39.7%, (0.08±1.4 ຄົນຕໍ່ເຫຼັ້ມ) ແລະ ຈາກການສຳຫຼວດສະພາວະທັນຕະສຸຂະພາບແຫ່ງຊາດຂອງໄທ ຄັ້ງທີ 8 ພຶດສະພາ 2560 ພົບວ່າ ສະພາບພະຍາດແຂ້ວແມງໃນກຸ່ມເດັກ ອາຍຸ 12 ປີ ມີແຂ້ວເປັນແມງໃນແຂ້ວຖາວອນ 52.0% ຄ່າສະເລຍ DMFT= 1,4/ຄົນ ແຂ້ວແມງສ່ວນຫຼາຍບໍ່ໄດ້ຮັບການປິ່ນປົວ 31.5%, ໃນສະພາບການແບບນີ້ ສະແດງໃຫ້ເຫັນວ່າພຶດຕິກຳການຖູແຂ້ວຂອງເດັກ ອາຍຸ 12 ປີ ມີການຖູແຂ້ວຫຼັງອາຫານ ຢູ່ໂຮງຮຽນ ແລະ ທີ່ບ້ານ ກ່ອນເອົາ 13.3% ຖູແຂ້ວຫຼັງອາຫານເປັນບາງມື້ 31.4%, ບໍ່ເຄີຍຖູແຂ້ວຫຼັງອາຫານເລີຍມີ 55.3% ສະແດງວ່ານັກຮຽນໃຫ້ຄວາມຮ່ວມມືໃນການຖູແຂ້ວຫຼັງອາທີ່ໂຮງຮຽນໜ້ອຍລົງ (ສຳນັກງານ ທັນຕະສາທາລະສຸກ ກົມອານາໄມ ກະຊວງສາທາລະນາສຸກຂອງປະເທດໄທ 2560:23-24);

ໂຮງຮຽນປະຖົມສົມບຸນໄຊກປ່າຫຼວງເປັນໂຮງຮຽນໜຶ່ງທີ່ຕັ້ງຢູ່ໃນເຂດເມືອງໃຫຍ່ ແລະ ເປັນໂຮງຮຽນຕົວຢ່າງທີ່ນອນໃນແຜນໂຄງການສົ່ງເສີມ ແລະ ປ້ອງກັນພະຍາດໃນເດັກເປັນໂປແກມ ຫຼື ການວາງແຜນໃນໂຮງຮຽນ ແລະໂຄງການຮັກສາສຸຂະພາບຜົ້ງປາກ-ແຂ້ວ ປະກອບ 3 ພາກສ່ວນໃຫຍ່ຄື: ການໃຫ້ສຸຂະສຶກສາ, ການບໍລິການດ້ານສຸຂະພາບ ແລະ ສິ່ງແວດລ້ອມທີ່ເປັນປະໂຫຍດຕໍ່ຮ່າງກາຍ, ປະຈຸບັນແມ່ນລວມມີ 8 ອົງປະກອບ ທີ່ເປັນແບບແຜນໃນການຮັກສາສຸຂະພາບຄື: ການໃຫ້ສຸຂະສຶກສາ, ກາຍະສຶກສາ, ການບໍລິການດ້ານສຸຂະພາບ, ດ້ານໂພຊະນາການ, ການສົ່ງເສີມສຸຂະພາບໃຫ້ຄູອາຈານ, ການບໍລິການໃຫ້ຄຳປຶກສາແນະນຳ, ສະພາບແວດລ້ອມຂອງໂຮງຮຽນ ແລະ ການຮ່ວມມືຂອງຜູ້ປົກຄອງກໍ່ຄືການຮ່ວມມືຂອງນັກຮຽນ.

ຈາກບັນຫາ ແລະ ຂໍ້ມູນເບື້ອງຕົ້ນເຮັດໃຫ້ຮູ້ພຶດຕິກຳຕ່າງໆ ທີ່ເປັນຄວາມສ່ຽງກັບການເກີດເປັນພະຍາດແຂ້ວແມງຂອງເດັກ 10 -12 ປີ ເຊິ່ງເປັນບັນຫາທີ່ສຳຄັນ ແລະຍັງບໍ່ມີບົດສຳຫຼວດວິໄຈເທື່ອ ນັບຕັ້ງແຕ່ໂຄງການທັນຕະກຳໂຮງຮຽນຂອງຄະນະທັນຕະແພດສາດ ມະຫາວິທະຍາໄລສຸຂະພາບ ໄດ້ລົງໃຫ້ການສຸຂະສຶກສາທາງດ້ານຕະກຳໃຫ້ໂຮງຮຽນ ທີ່ປະຖົມສົມບູນໄຊກປະຫຼວງ ເມືອງສີສັດຕະນາກ ເຊິ່ງທີມງານພາກວິຊາທັນຕະກຳເດັກສົນໃຈສຶກສາປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳເບິ່ງແຍ່ງສຸຂະພາບປາກແລແຂ້ວເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປໍ 5 ໂດຍນຳແນວຄິດ precede framework ມາປັບປຸງນໍໃຊ້ ໃນການສຶກສາຄັ້ງນີ້, ສຳຫຼັບການສຶກສານີ້ທີມງານໄດ້ນຳຂັ້ນຕອນທີ່ 4 ການວິເຄາະດ້ານການສຶກສາ (Education Diagnosis) ມາເປັນແນວທາງໃນການສ້າງແບບສອບຖາມ ແລະ ສ້າງກອບແນວຄິດ, ນຳຜົນ ແລະ ບັນຫາທີ່ພົບຈາກການສຶກສາຄັ້ງນີ້ ເປັນແນວທາງແກ້ໄຂບັນຫາ ແລະ ພັດທະນາ ຫຼື ເພີ່ມທັກສະໃນການປ້ອງພະຍາດພະຍາກແຂ້ວແມງຂອງນັກຮຽນຊັ້ນປໍ 5 ໃຫ້ໜ່ວຍງານທັນຕະກຳຊຸມຊົນເພື່ອແກ້ໄຂບັນຫາທີ່ມີຜົນຕໍ່ສຸຂະພາບຜົ້ງປາກ-ແຂ້ວຂອງເດັກນັກຮຽນປໍ 5.

## ວິທີວິທະຍາການຄົ້ນຄວ້າ

### ການອອກແບບການຄົ້ນຄວ້າ

ການຄົ້ນຄ້ວາຄັ້ງນີ້ ເປັນການວິເຄາະແບບຕັດຂວາງ (cross-sectional survey research) ໂດຍຈຸດປະສົງເພື່ອສຶກສາພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາກແຂ້ວແມງຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 5 ໂຮງຮຽນປະຖົມສົມບຸນ ໄຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ.

### ສະຖານທີ່ ແລະ ໄລຍະເວລາການຄົ້ນຄວ້າ

ການສຶກສາຄັ້ງນີ້ແມ່ນໄດ້ຈັດຕັ້ງປະຕິບັດຢູ່ ໂຮງຮຽນປະຖົມສົມບຸນ ໄຊກປ່າຫຼວງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

### ປະຊາກອນສຶກສາ ແລະ ຂະໜາດຕົວຢ່າງ

ປະຊາກອນສຶກສາແມ່ນນັກຮຽນທີ່ກຳລັງຮຽນຊັ້ນປະຖົມສຶກສາປີທີ່ 5 ໂຮງຮຽນປະຖົມສົມບຸນ ໄຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ. ປະຈຳສົກຮຽນ 2022-2023, ຈຳນວນ 72 ຄົນ.

## ເຄື່ອງມືການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາ ໂດຍນຳແນວຄິດ precede framework ມາປັບປຸງນຳໃຊ້ ໃນການສຶກສາຄັ້ງນີ້, ເຊິ່ງປະກອບດ້ວຍ: ພາກສ່ວນທີ 1 ຂໍ້ມູນທົ່ວໄປ, ພາກສ່ວນທີ 2 ຄວາມຮູ້ ແລະ ທັດສະນະຄະຕິກ່ຽວກັບພະຍາດແຂ້ວແມງ, ພາກສ່ວນທີ 3 ປັດໃຈເອື້ອຍ, ພາກສ່ວນທີ 4 ປັດໃຈສົ່ງເສີມ, ແລະ ພາກສ່ວນທີ 5 ພຶດຕິກຳປ້ອງກັນພະຍາດແຂວງແມງ.

## ຂະບວນການວິເຄາະຂໍ້ມູນ

ສະຖິຕິທີ່ໃຊ້ເຂົ້າໃນການວິເຄາະຜົນການສຶກສາໃນຄັ້ງນີ້:

- ສະຖິຕິພັນລະນາ (Descriptive Statistic) ສຳລັບຂໍ້ມູນທົ່ວໄປປະກອບດ້ວຍ: ເພດ, ອາຍຸ, ບຸກຄົນທີ່ອາໃສຢູ່ນຳ, ອາຊີບ, ລະດັບການສຶກສາຂອງຜູ້ປົກຄອງ ແລະ ລາຍຮັບສະເລ່ຍຕໍ່ເດືອນຂອງຜູ້ປົກຄອງໂດຍໃຊ້ ຄວາມຖີ່, ເປີເຊັນ, ຄ່າສະເລ່ຍ ແລະ ສ່ວນບ່ຽງເບນມາດຕະຖານ.
- ສະຖິຕິອ້າງອີງ (inferential Statistics) ເພື່ອທົດສອບສົມມຸດຕິຖານ ປະກອບດ້ວຍ:

+ ວິເຄາະຄວາມສຳພັນລະຫວ່າງພຶດຕິກຳການປ້ອງກັນພະຍາດແຂ້ວແມງ ກັບຕົວແປຕົ້ນ ເພດ, ອາຍຸຜູ້ປົກຄອງ, ບຸກຄົນທີ່ອາໃສຢູ່ນຳ, ຈຳນວນສະມາຊິກໃນຄອບຄົວຂອງນັກຮຽນ, ອາຊີບຂອງຜູ້ປົກຄອງ ແລະ ຈຳນວນເງິນທີ່ໄດ້ມາໂຮງຮຽນເປັນ ກີບຕໍ່ມື້. ລະດັບການສຶກສາຂອງຜູ້ປົກຄອງຂອງນັກຮຽນຊັ້ນປໍ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ ໂດຍໃຊ້ ສະຖິຕິ Chi-square ແລະ Fisher's exact test.
+ ວິເຄາະຄວາມສຳພັນລະຫວ່າງພຶດຕິກຳການປ້ອງກັນພະຍາດແຂ້ວແມງກັບຕົວແປຕົ້ນ ແມ່ນ: ລາຍຮັບສະເລ່ຍຂອງຄອບຄົວ (ຕໍ່ເດືອນ), ຄວາມຮູ້ພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງ, ທັດສະນະຄະຕິ ກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ, ການຮັບຮູ້ກ່ຽວກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ, ການເຂົ້າເຖິງການບໍລິການດ້ານທັນຕະກຳ, ການຮັບຮູ້ຂໍ້ມູນຂ່າວສານ ກ່ຽວກັບພະຍາດແຂ້ວແມງ ແລະ ການສະໜັບສະໜູນທາງສັງຄົມ ດ້ານການປ້ອງກັນພະຍາດແຂ້ວແມງ ຂອງນັກຮຽນຊັ້ນປໍ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ໂດຍໃຊ້ສະຖິຕິສຳພັນແບບ spearman rank correlation.

## ຈັນຍາທຳໃນການຄົ້ນຄວ້າ

ການສຶກສາຄັ້ງນີ້ ແມ່ນໄດ້ຖືກອະນຸມັດຈັນຍາທຳການຄົ້ນຄວ້າ ຈາກຄະນະກຳມະການຈັນຍາທຳການຄົ້ນຄວ້າຂອງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບເລກທີ 447/ຄຈຄ ນະຄອນຫຼວງວຽງຈັນ, ລົງວັນທີ 15/02/2023 ເຊິ່ງຜູ້ເຂົ້າຮ່ວມແມ່ນ ມີຄວາມສະໝັກໃຈ ແລະ ໄດ້ຮັບການຍິນຍອມກ່ອນການສຳພາດ. ຜູ້ເຂົ້າຮ່ວມຈະຖືກຮັບປະກັນຄວາມເປັນສ່ວນຕົວ ແລະ ຄວາມລັບຂອງຂໍ້ມູນ. ຜູ້ເຂົ້າຮ່ວມຮູ້ສຶກບໍ່ ສະບາຍໃຈ ຫຼື ມີຄວາມບໍ່ສະດວກເຂົ້າຮ່ວມໃນການສຳພາດສາມາດ ຖອນຕົວອອກຈາກການສຶກສາໄດ້ທຸກເວລາໂດຍ ທີ່ຈະບໍ່ມີ ບັນຫາ ຫຼື ຜົນກະທົບໃດໆ.

## ຜົນການຄົ້ນຄ້ວາ

### ຄຸນລັກສະນະດ້ານປະຊາກອນສາດ

ຜົນການສຶກສາຄັ້ງນີ້ ໃນຕາຕະລາງທີ່ 1 ສະແດງໃຫ້ຮູ້ວ່າ ກຸ່ມຕົວຢ່າງຂອງຜູ້ປົກຄອງເດັກທັງໝົດ ມີ 72 ຄົນ ເປັນຍິງ 65.3% ແລະ ຊາຍ 34.%, ອາຍຸສະເລ່ຍ 42.89 ອາຍຸຕ່ຳສຸດ 33 ປີ, ສູງສຸດ 65 ປີ, ເດັກສ່ວນໃຫ່ຍອາໃສຢູ່ນຳພໍ່ແມ່ 84.7%, ຈຳນວນສະມາຊິກໃນຄອບຄົວ ສະເລ່ຍ 5.57 ຄົນ, ອາຊີບຜູ້ປົກຄອງສ່ວນຫຼາຍ ແມ່ນພະນັກງານລັດທະກອນ 44.4%, ລະດັບການສຶກສາຂອງຜູ້ປົກຄອງ ແມ່ນປະລິນຍາຕຣີ 31.7%, ລາຍໄດ້ສະເລ່ຍຕໍ່ເດືອນ 4,639,236 ກີບ ແລະ ເງິນເດັກທີ່ໄດ້ຈາກຜູ້ປົກຄອງໃຫ້ໄປໃຊ້ຈ່າຍຢູ່ໂຮງຮຽນສະເລ່ຍ 18,139 ກີບ.

**ຕາຕະລາງທີ 1: ອັດຕາສ່ວນຮ້ອຍໃນກຸ່ມຕົວຢ່າງຜູ້ປົກຄອງຂອງນັກຮຽນຊັ້ນປະຖົມ ປີທີ 5 (n=72)**

| ຕົວຜັນແປ | ຈຳນວນ=72 | ເປີເຊັນ |
|---|---|---|
| **ເພດ** | | |
| ຊາຍ | 25 | 34.7 |
| ຍິງ | 47 | 65.3 |
| **ອາຍຸຜູ້ປົກຄອງ (ປີ)** | | |
| **Mean**= 42.89, **S.D**= 7.51, **Min-Max**= 31 - 65 | | |
| **ບຸກຄົນທີ່ເດັກອາໃສຢູ່ນຳ** | | |
| ຢູ່ນຳພໍ່-ແມ່ | 61 | 84.7 |
| ຢູ່ນຳພໍ່ | 2 | 2.8 |
| ຢູ່ນຳແມ່ | 2 | 2.8 |
| ຢູ່ນຳຍາດພີ່ນ້ອງ | 3 | 4.2 |
| ອື່ນໆ | 4 | 5.6 |
| **ຈຳນວນສະມາຊິກໃນຄອບຄົວຂອງນັກຮຽນ** | | |
| **Mean**= 5.52, **S.D**= 3.156, **Min-Max**= 3 - 12 | | |
| **ອາຊີບຂອງຜູ້ປົກຄອງເດັກ** | | |
| ຄ້າຂາຍ | 18 | 25.0 |
| ຮັບຈ້າງທົ່ວໄປ | 5 | 6.9 |
| ແມ່ບ້ານ/ພໍ່ບ້ານ | 8 | 11.1 |
| ພະນັກງານລັດທະກອນ | 32 | 44.4 |
| ອາຊີບອື່ນໆ | 9 | 12.5 |

| ຕົວຜັນແປ | ຈຳນວນ=72 | ເປີເຊັນ |
|---|---|---|
| **ລະດັບສຶກສາຂອງຜູ້ປົກຄອງ** | | |
| ປະຖົມສຶກສາ | 5 | 6.9 |
| ມັດທະຍົມຕອນຕົ້ນ/ປາຍ | 29 | 40.3 |
| ປະລິນຍາຕຣີ | 30 | 41.7 |
| ສູງກວ່າປະລິນຍາຕຣີ | 8 | 11.1 |
| **ລາຍໄດ້ຂອງຄອບຄົວສະເລ່ຍຕໍ່ເດືອນ (ກີບ)** | | |
| **Mean**= 4.639.236, **S.D**= 2.755.263, **Min-Max**= 1.500.000 – 13.000.000 | | |
| **ຈຳນວນເງິນທີ່ໃຫ້ລູກ/ນ້ອງໄປໂຮງຮຽນ (ນັກຮຽນເປັນກີບຕໍ່ມື້)** | | |
| **Mean**= 18.139, **S.D**= 10.360, **Min-Max**= 5.000 – 50.000 | | |

**ຜົນການວິເຄາະພຶດຕິກຳດ້ານການເບິ່ງແຍ່ງສຸຂະພາບແຂ້ວເພື່ອການປ້ອງພະຍາແຂ້ວແມງຂອງເດັກນັກຮຽນ**

ພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງພະຍາດແຂ້ວແມງຂອງເດັກນັກຮຽນນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໄຊກປ່າຫຼວງ ເມືອງສີສັດຕະນາກ ແມ່ນຢູ່ໃນລະດັບການສູງ 6.9%, ລະດັບປານກາງກັບແມ່ນ 65.3%, ແລະ ລະດັບຕ່ຳຢູ່ທີ່ 27.8%.

**ຕາຕະລາງທີ 2: ພຶດຕິກຳດ້ານການເບິ່ງແຍ່ງສຸຂະພາບແຂ້ວເພື່ອການປ້ອງພະຍາແຂ້ວແມງໃນກຸ່ມຕົວຢ່າງຂອງເດັກນັກຮຽນນັກຮຽນຊັ້ນປະຖົມ ປີທີ 5**

| ຕົວຜັນແປ | ຈຳນວນ=72 | ເປີເຊັນ |
|---|---|---|
| **ພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ** | | |
| ລະດັບສູງ (3.01-4.00) | 5 | 69.9 |
| ລະດັບປານກາງ (2.01-3.00) | 47 | 65.3 |
| ລະດັບຕ່ຳ (1.0-2.0) | 20 | 27.8 |
| **Mean**= 2.79, **S.D**= 0.55 | | |

ຕາຕະລາງທີ 3 ສະແດງໃຫ້ຮູ້ວ່າ ຄວາມຮູ້ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ (P-value= 0.003, rs= 0.349), ການຮັບຮູ້ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ເພື່ອປ້ອງກັນພະຍາດແຂ້ວແມງ (P-value= 0.004, rs= 0.335) ແລະ ການເຂົ້າເຖິງສະຖານການບໍລິການດ້ານທັນຕະກຳ (P-value = 0.001, rs= 0.392) ມີຄວາມສຳພັນທາງບວກກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໄຊກປ່າຫຼວງ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນຢ່າງມີຄວາມສຳພັນທາງສະຖິຕິທີ່ລະດັບ 0.01. ສ່ວນການໄດ້ຮັບຂໍ້ມູນຂ່າວສານພະຍາດແຂ້ແມງ (P-value= 0.000, rs= 0.549) ແລະ ການສະໜັບສະໜຸ່ນທາງດ້ານສັງຄົມດ້ານການປ້ອງກັນພະຍາດແຂ້ວແມງ (P-value= 0.000, rs= 0.549) ມີຄວາມສຳພັນທາງສະຖິຕິທີ່ 0.01 ຄືກັນ. ແຕ່ລາຍໄດ້ສະເລ່ຍຕໍ່ເດືອນຂອງຄອບຄົວກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໄຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ ແມ່ນບໍ່ມີຄວາມສຳພັນກັນ.

**ຕາຕະລາງທີ 3: ຜົນການວິເຄາະປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳດ້ານການເບິ່ງແຍງສຸຂະພາບ ແຂ້ວເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປະຖົມ ປີທີ 5**

| ປັດໃຈຄວາມສຳພັນ | $r_s$ | *P*-value | ລະດັບ |
|---|---|---|---|
| • ລາຍໄດ້ສະເລ່ຍຕໍ່ເດືອນຂອງຄອບຄົວ | 0.030 | 0.799 | |
| • ຄວາມຮູ້ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ | 0.349** | 0.003 | **ລະດັບຕ່ຳ** |
| • ທັດສະນະຄະຕິກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວ • ເພື່ອປ້ອງກັນພະຍາດແຂ້ວແມງ | 0.059 | 0.621 | **ບໍ່ມີຄວາມສຳພັນກັນ** |
| • ການຮັບຮູ້ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ | 0.335** | 0.004 | **ລະດັບຕ່ຳ** |
| • ການເຂົ້າເຖິງສະຖານການບໍລິການດ້ານທັນຕະກຳ | 0.392** | 0.001 | **ລະດັບຕ່ຳ** |
| • ການໄດ້ຮັບຂໍ້ມູນຂ່າວສານພະຍາດແຂ້ວແມງ, | 0.549** | 0.000 | **ລະດັບປານກາງ** |
| • ການສະໜັບສະໜຸ່ນທາງດ້ານສັງຄົມດ້ານການປ້ອງກັນພະຍາດແຂ້ວແມງ | 0.549** | 0.000 | **ລະດັບປານກາງ** |

## ອັດຕາການເກີດເປັນພະຍາດແຂ້ວແມງ ໃນແຂ້ວຖາວອນ ແລະ ແຂ້ວນ້ຳນົມ

ຕາຕະລາງທີ 4 ສະແດງເຖິງ ອັດຕາການເກີດເປັນພະຍາດແຂ້ວແມງໃນແຂ້ວຖາວອນ ຂອງເດັກນັກຮຽນຊັ້ນປໍ5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ ຈຳນວນ 72 ຄົນ: ບໍ່ພົບແຂ້ວເປັນແມງຈຳນວນ 29 ຄົນ ມີເພດຊາຍ ທີ່ບໍ່ເປັນແຂ້ວແມງສູງກວ່າເພດຍິງແມ່ນ 62.1% ແລະ ພົບແຂ້ວເປັນແມງຈຳນວນ 43 ຄົນ ມີເພດຍິງທີ່ເປັນແມງສູງກວ່າເພດຊາຍ 58.1%. ໃນແຂ້ວນ້ຳນົມທີ່ບໍ່ເປັນແມງ 33 ຄົນ, ເພດຍິງບໍ່ເປັນແຂ້ວຫຼາຍກວ່າເພດຊາຍ 60.6% ແລະ ເປັນແມງໃນແຂວນ້ຳນົມ 39 ຄົນ ໃນນີ້ເພດຊາຍເປັນແຂ້ວແມງຫຼາຍກວ່າເພດຍິງ 58.9%.

**ຕາຕະລາງທີ 4: ອັດຕາການເກີດເປັນພະຍາດແຂ້ວແມງຂອງເດັກນັກຮຽນຊັ້ນປໍ 5**

| ຕົວແປ | ແຂ້ວຖາວອນ | | | | ແຂ້ວນ້ຳນົມ | | | |
|---|---|---|---|---|---|---|---|---|
| | ຈຳນວນ (ຄົນ) | | ເປີເຊັນ | | ຈຳນວນ (ຄົນ) | | ເປີເຊັນ | |
| ບໍ່ເປັນແມງ | 29 | | 40.3 | | 33 | | 45.8 | |
| ເປັນແຂ້ວແມງ | 43 | | 59.7 | | 39 | | 54.2 | |
| ລວມ | 72 | | 100 | | 72 | | 100 | |
| | ແຂ້ວບໍ່ເປັນແມງ | | ແຂ້ວເປັນແມງ | | ແຂ້ວບໍ່ເປັນແມງ | | ແຂ້ວເປັນແມງ | |
| | ຈຳນວນ | ເປີເຊັນ | ຈຳນວນ | ເປີເຊັນ | ຈຳນວນ | ເປີເຊັນ | ຈຳນວນ | ເປີເຊັນ |
| **ເພດຊາຍ** | 18 | 62.1 | 18 | 41.9 | 13 | 39.4 | 23 | 58.9 |
| **ເພດຍິງ** | 11 | 37.9 | 25 | 58.1 | 20 | 60.6 | 16 | 41.1 |
| **ລວມ** | **29** | 100 | **43** | 100 | **33** | 100 | **39** | 100 |

## ການສົນທະນາ

### ພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງ

ພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງໃນພາບລວມຢູ່ລະດັບປານກາງ (2.79±0.55) ສອດຄອງກັບ ພິດສະນັນ ແສນສຸກ (2562) ໄດ້ສຶກສາປັດໃຈທີ່ມີຄວາມສຳພັນ ຕໍ່ພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງຂອງນັກຮຽນຊັ້ນປະຖມປີທີ່ 6 ອຳເພີນົບພິຕຳ ແຂວງນະຄອນສີທຳມະຣາດ (2.67±0.27) ເມື່ອຈຳແນກຕາມແຕ່ລະຂໍ້ ພົບວ່າ: ດ້ານການຖູແຂ້ວ ມີຄະແນນສະເລ່ຍລະດັບປານກາງ (2.03±0.62), ແຕ່ບົດສຶກສາຂອງ ພິດສະນັນ ແສນສຸກ (2562) ຢູ່ທີ່ລະດັບສູງ (3.16±0.89), ດ້ານການກວດສຸຂະພາບດ້ວຍຕົນເອງ ແລະ ການບໍລິໂພກອາຫານ ມີຄະແນນສະເລ່ຍລະດັບປານກາງ (2.04±0.54) ການສຶກສາຂອງພິດສະນັນ ແສນສຸກ ຈະແຕກຕ່າງລະດັບການບໍລິໂພກອາຫານສູງ (3.18±0.84), ແລະ ດ້ານການໄປພົບທັນຕະແພດ ມີຄະແນນສະເລ່ຍລະດັບຕ່ຳ (1.83±0.58).

### ຄວາມສຳພັນ

ລາຍໄດ້ສະເລ່ຍຕໍ່ເດືອນຂອງຄອບຄົວ, ຄວາມຮູ້ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງ, ທັດສະນະຄະຕິກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງ, ການຮັບຮູ້ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ, ການເຂົ້າເຖິງສະຖານການບໍລິການດ້ານທັນຕະກຳ, ການໄດ້ຮັບຂໍ້ມູນຂ່າວສານພະຍາດແຂ້ວແມງ, ການສະໜັບສະໜຸນທາງດ້ານສັງຄົມດ້ານການປ້ອງກັນພະຍາດແຂ້ວແມງ ກ່ຽວກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ.

ຄວາມຮັບຮູ້ກ່ຽວກັບພຶດຕິກຳ ການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ ມີຄວາມສຳພັນທາງບວກກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວ ເຊິ່ງສອດຄອງກັບການສຶກສາຂອງ ຊົມນາດ ທັບສິນວນ (2549) ໄດ້ສຶກສາປັດໃຈທີ່ມີຄວາມສຳພັນກັບພຶດຕິກຳການເບິ່ງແຍງສຸຂະພາບຜົ້ງປາກຂອງນັກຮຽນລະດັບມັດທະຍົມຕອນຕົ້ນ ໃນເຂດອຳເພີເມືອງ ແຂວງເພັດບູລີ ປະເທດໄທ ພົບວ່າ ການຮັບຮູ້ເຖິງປະໂຫຍດຂອງການເບິ່ງແຍງສຸຂະພາບຜົ້ງປາກ ມີຄວາມສຳພັນທາງບວກຕໍ່ພຶດຕິກຳການເບິ່ງແຍງຜົ້ງປາກ ແລະ ສອດຄອງກັບການສຶກສາຂອງ ວິທະຍາ ໄປທາສິນ (2549) ໄດ້ສຶກສາປັດໃຈທີ່ມີຜົນຕໍ່ພຶດຕິກຳສຸຂະພາບຜົ້ງປາກເດັກ ນັກຮຽນປະຖົມຊັ້ນປີທີ່ 4-6 ຂອງອຳເພີສານຮ້ອຍຍອດ ແຂວງປຣະຈວບສີຣິຂັນ ປະເທດໄທ ພົບວ່າ ປັດໃຈການຮັບຮູ້ປະໂຫຍດຂອງການປະຕິບັດ

ພຶດຕິກຳສົ່ງເສີມສຸຂະພາບມີຄວາມສຳພັນທາງບວກກັບພຶດຕິກຳສຸຂະພາບ ສະແດງໃຫ້ເຫັນວ່າ ການທີ່ນັກຮຽນມີການຮັບຮູ້, ຄວາມຮູ້ສຶກ, ຄວາມເຂົ້າໃຈ ແລະ ຄວາມເຊື່ອຖືກ່ຽວກັບປະໂຫຍດ ຫຼື ຄວາມສ່ຽງໃນການເກີດເປັນພະຍາດແຂ້ວແມງ ຫຼື ມີໂອກາດສ່ຽງຕໍ່ພາວະແຊກຊ້ອນຕ່າງໆ ຈາກການເກີດມີພະຍາດແຂ້ວແມງພຽງຢ່າງດຽວ ພຽງພໍທີ່ຈະກະຕຸ້ນໃຫ້ນັກຮຽນເກີດພຶດຕິກຳ ການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ ການຮັບຮູ້ໂອກາດສ່ຽງຂອງການເກີດພະຍາດແຂ້ວແມງ ຈະເຮັດໃຫ້ນັກຮຽນພະຍາຍາມຫຼີກລ້ຽງການກະທຳຕ່າງໆ ທີ່ເຮັດໃຫ້ເກີດພະຍາດແຂ້ວແມງ ແລະ ປະຕິບັດຕາມແນວທາງການເບິ່ງແຍງສຸຂະພາບຜົ້ງປາກໃນເດັກໄວຮຽນ.

ການເຂົ້າເຖິງສະຖານການບໍລິການ ດ້ານທັນຕະກຳເພື່ອປ້ອງກັນພະຍາດແຂ້ວຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ ມີຄວາມສຳພັນທາງບວກກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ ເຊິ່ງສອດຄອງກັບການສຶກສາຂອງ ຊິມນາດ ທັບສີນວນ (2549) ໄດ້ສຶກສາປັດໃຈທີ່ມີຄວາມສຳພັນກັບ ພຶດຕິກຳການເບິ່ງແຍງສຸຂະພາບຜົ້ງປາກ ຂອງນັກຮຽນລະດັບມັດທະຍົມຕອນຕົ້ນ ໃນເຂດອຳເພີເມືອງ ແຂວງເພັດບູລີ ປະເທດໄທ ພົບວ່າ ປັດໃຈເອື້ອອຳນວຍແມ່ນ ການບໍລິການດ້ານທັນຕະສຸຂະພາບມີຄວາມສຳພັນທາງບວກ ກັບພຶດຕິກຳການເບິ່ງແຍງສຸຂະພາບຜົ້ງປາກ ແລະ ສອດຄອງກັບ ພິດສະນັນ ແສນສຸກ (2562) ໄດ້ສຶກສາປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນແຂ້ວແມງຂອງນັກຮຽນຊັ້ນປະຖມປີທີ່ 6 ອຳເພີນົບພິຕຳ ແຂວງນະຄອນສີທຳມະຣາດ ສະແດງໃຫ້ເຫັນວ່າ ນັກຮຽນທີ່ມີການເຂົ້າເຖິງສະການບໍລິການທາງທັນຕະກຳທີ່ສູງ ຈະດຣັດໃຫ້ເກີດຄວາມເອົາໃຈໃສ່ ແລະ ມີພຶດຕິກຳໃນການໄປກວດສຸຂະພາບແຂ້ວທີ່ດີ ເຮັດໃຫ້ເດັກມີທັດສະນະຄະຕິທີດີຕໍ່ທັນຕະບຸກຄະລະກອນ ແລະ ໃຫ້ຄວາມຮ່ວມມືໃນການປິ່ນປົວແຂ້ວ.

ການຮັບຮູ້ຂໍ້ມູນຂ່າວສານ ພະຍາດແຂ້ວເພື່ອການປ້ອງກັນພະຍາດແຂ້ວແມງ ມີຄວາມສຳພັນທາງບວກກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວເຊິ່ງສອດຄອງກັບກັບການສຶກສາຂອງ ຊິມນາດ ທັບສີນວນ (2549) ໄດ້ສຶກສາປັດໃຈທີ່ມີຄວາມສຳພັນ ກັບພຶດຕິກຳການເບິ່ງແຍງສຸຂະພາບຜົ້ງປາກ ຂອງນັກຮຽນລະດັບມັດທະຍົມຕອນຕົ້ນ ໃນເຂດອຳເພີເມືອງ ແຂວງເພັດບູລີ ປະເທດໄທ ແລະ ພິດສະນັນ ແສນສຸກ (2562) ໄດ້ສຶກສາ ປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳ ການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງຂອງນັກຮຽນຊັ້ນປະຖມປີທີ່ 6 ອຳເພີນົບພິຕຳ ແຂວງນະຄອນສີທຳມະຣາດ ພົບວ່າ: ການໄດ້ຮັບຂໍມູນຂ່າວສານໃນການເບິ່ງແຍງສຸຂະພາບຜົ້ງປາກ ແລະ ແຂ້ວ ມີຄວາມສຳພັນທາງບວກກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເຊິ່ງສະແດງໃຫ້ເຫັນວ່ານັກຮຽນທີ່ໄດ້ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບພະຍາດແຂ້ວແມງ ທີ່ຖືກຕ້ອງຜ່ານສື່ຊ່ອງທາງຕ່າງໆ ຈະສົ່ງຜົນໃຫ້ມີພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ ໄດ້ດີຂຶ້ນຕາມລຳດັບ, ການໄດ້ຮັບຮູ້ຂໍ້ມູນຂ່າວສານທີ່ດີເປັນພື້ນຖານທີ່ສຳຄັນ ສົ່ງຜົນໃຫ້ເກີດຄວາມເຂົ້າໃຈ, ຄວາມເຊື່ອຖືກ່ຽວກັບປະໂຫຍດ ຫຼື ຄວາມສ່ຽງໃນການເປັນພະຍາດແຂ້ວແມງ ຈະເຮັດໃຫ້ມີສຸຂະພາບແຂ້ວທີ່ດີ ເມື່ອນັກຮຽນໄດ້ຮັບຂໍ້ມູນຂ່າວສານທີ່ດີ ຈະມີພຶດຕິກຳການເບິ່ງແຍງສຸຂະພາບຜົ້ງປາກ ແລະ ແຂ້ວໄດ້ດີ ສາມາດດຳເນີນຊີວິດທີ່ມີຄູນນະພາບທີ່ດີ.

ການສະໜັບສະໜູນທາງສັງຄົມ ດ້ານການປ້ອງກັນພະຍາດແຂ້ວແມງ ມີຄວາມສຳພັນທາງບວກກັບພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນແຂ້ວແມງ ເຊິ່ງມັນຍັງສອດຄອງກັບການສຶກສາຂອງ ນັດທະວັດ ສຸວາກອນ ແລະ ປຣາໂມດ ວົງສະວັດ (2561) ໄດ້ສຶກສາ ປັດໃຈທີ່ມີຜົນຕໍ່ການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 6 ແລະ ສອດຄອງກັບພິດສະນັນ ແສນສຸກ (2562) ໄດ້ສຶກສາ ປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳ ການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງ ຂອງນັກຮຽນຊັ້ນປະຖມປີທີ່ 6 ອຳເພີນົບພິຕຳ ແຂວງນະຄອນສີທຳມະຣາດ ພົບວ່າ: ປັດໃຈເສີມຕໍ່ພຶດຕິກຳການປ້ອງກັນພະຍາດແຂ້ວແມງ ເຊັ່ນ: ການສະໜັບສະໜູນທາງສັງຄົມ ມີຜົນທາງບວກຕໍ່ພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງ ແລະ ສອດຄອງກັບການສຶກສາຂອງ ວິທະຍາ ໂປທາສິນ (2549) ໄດ້ສຶກສາປັດໃຈທີ່ມີຜົນຕໍ່ພຶດຕິກຳສຸຂະພາບຜົ້ງປາກເດັກນັກຮຽນປະຖົມສຶກສາຊັ້ນປີທີ່ 4-6 ຂອງອຳເພີສາມຮ້ອຍຍອດ ແຂວງປຣະຈວບສີຣີຂັນ ປະເທດໄທ ພົບວ່າ: ການໄດ້ຄວາມສະໜັບສະໜູນທາງສັງຄົມມີຄວາມສຳພັນທາງບວກກັບພຶດຕິກຳສຸຂະພາບຜົ້ງປາກ ສະແດງໃຫ້ເຫັນວ່າ ນັກຮຽນຕ້ອງການຄວາມເອົາໃຈໃສ່ຈາກບຸກຄົນອ້ອມຂ້າງ ເຊັ່ນ: ບຸກຄົນໃນຄອບຄົວ ແລະ ເພື່ອນ, ການໄດ້ຮັບແຮງສະໜັບສະໜຸນຈາກບຸກຄົນໃນຄອບຄົວ ແລະ ເພື່ອນ ສາມາດກະຕຸ້ນ ຫຼື ຈູງໃຈໃຫ້ເດັກມີຄວາມສົນໃຈໃນການເບິ່ງແຍງສຸຂະພາບແຂ້ວຫຼາຍຂຶ້ນ ການໃຊ້ປັດໃຈເສີມ ໂດຍໃຊ້ການກະຕຸ້ນສ້າງແຮງສົ່ງເສີມໃຫ້ເດັກ ເປັນການໃຫ້ລ້າງວັນ, ຄຳຊົມເຊີຍ, ການຍອມຮັບ, ການລົງໂທດ ຫຼື ການບໍ່ຍອມຮັບໃນພຶດຕິກຳນັ້ນ, ການສະແດງຄວາມຮັກ ແລະ ຊື່ນຊົມກະຕຸ້ໃຫ້ກຳລັງໃຈໃຫ້ນັກຮຽນມີພຶດຕິກຳສຸຂະພາບຜົ້ງປາກທີ່ດີ.

**ອັດຕາຊຸກຊຸມການເປັນພະຍາດແຂ້ວແມງ**

ອັດຕາການເກີດເປັນພະຍາດ ແຂ້ວແມງໃນແຂ້ວຖາວອນ ຂອງເດັກນັກຮຽນຊັ້ນປໍ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ຈຳນວນ 72 ຄົນ: ບໍ່ພົບແຂ້ວເປັນແມງ ຈຳນວນ 29 ຄົນ (40.3%) ແລະ ພົບແຂ້ວເປັນແມງຈຳນວນ 43 ຄົນ (59.7%) ມີເພດຍິງທີ່ເປັນແມງສູງກວ່າເພດຊາຍ, ເຊິ່ງມີອັດຕາການເກີດເປັນພະຍາແຂ້ວແມງຕໍ່າກວ່າການສຶກສາຂອງ ສີວິໄຊ ພົມມະຫາໄຊ (ຄສ 2014) ໄດ້ສຶກສາປັດໃຈທີ່ພົວພັນເຖິງພະຍາດແຂ້ວແມງ ໃນເດັກນັກຮຽນ ອາຍຸ 12 ປີ ໃນນະຄອນຫຼວງວຽງຈັນ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ພົບວ່າ: ອັດຕາການເກີດເປັນພະຍາດແຂ້ວແມງໃນເດັກນັກຮຽນ 88.1% ແລະ ເພດຍິງເປັນພະຍາດແຂ້ວແມງຫຼາຍກວ່າເພດຊາຍ, ແຕ່ໃກ້ຄຽງກັບການສຶກສາຂອງ ສິນທິລາດ ປິລາກຸນ (ຄສ 2017) ໄດ້ສຶກສາພຶດຕິກຳຄວາມສຳພັນຕໍ່ການເກີດພະຍາດແຂ້ວແມງໃນເດັກ ອາຍຸ 12 ປີ ທີ່ເມືອງສັງທອງ ນະຄອນຫຼວງວຽງຈັນ ພົບວ່າ: ອັດຕາການເກີດເປັນພະຍາດແຂ້ວແມງຂອງເດັກນັກຮຽນ ມີຄ່າສະເລ່ຍແຂ້ວແມງ 39.7%, (0.08±1.4 ຄົນຕໍ່ເຫຼັ້ມ).

ໃນແຂ້ວນ້ຳນົມທີ່ບໍ່ເປັນແມງ 33 ຄົນ (45.8%) ແລະ ເປັນແມງໃນແຂ້ວນ້ຳນົມ 39 ຄົນ (54.2%) ໃນນີ້ເພດຊາຍເປັນແຂ້ວແມງຫຼາຍກວ່າເພດຍິງ ເຊິ່ງບໍ່ສອດຄອງກັບການສຶກສາຂອງ ສຸລິໂຍ ສຸວົງ (ຄສ 2023) ໄດ້ສຶກສາສະພາບເສດຖະກິດສັງຄົມຂອງຜູ້ປົກຄອງທີ່ມີການພົວພັນກັບສະພາບແຂ້ວແມງໃນເດັກອະນຸບານແຂວງໄຊຍະບູລີ ພົບວ່າ: ອັດຕາຊຸກຊຸມຂອງການເປັກເປັນພະຍາດແຂ້ວແມງໃນແຂ້ວນ້ຳນົມສູງກວ່າ (85.5%), ບໍ່ເປັນແມງໃນແຂ້ວນ້ຳນົມ (13.5%) ສະແດງວ່າທັນຕະກຳໂຮງຮຽນ ແລະ ທັນຕະກຳເຄືອນທີ່ເພື່ອການລົງໃຫ້ສຸຂະສຶກສາສຸຂະພາບປາກ ແລະ ແຂ້ວຂອງໂຮງຮຽນ ປະຖົມສົມບູນໂສກປ່າຫຼວງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ເປັນການເຝິກຫັດທັນຕະກຳເດັກຂອງນັກສຶກສາປີທີ່ 3,4,5 ແລະ 6 ແມ່ນສ່ວນໜຶ່ງຊ່ວຍພັດທະນາໃນດ້ານການບໍລິການ ການສິດສອນໃຫ້ສຸຂະສຶກສາ ແກ່ເດັກນັກຮຽນໃນໂຮງຮຽນປະຖົມໃຫ້ເຂົ້າໃຈແຈ້ງ ໃນການປ້ອງກັນພະຍາດແຂ້ວແມງ ພ້ອມທັງວິທີວາງແຜນປິ່ນປົວ ແລະ ແກ້ໄຂບັນຫາໄດ້ຢ່າງຖືກຕ້ອງ ແລະ ເໝາະສົມ ຈຶ່ງເຮັດໃຫ້ອັດຕາຊຸກຊຸມ ຂອງການເປັນພະຍາດແຂ້ວຈຶ່ງຕ່ຳລົງ ອາດເກີດຈາກເຂົາເຈົ້າໄດ້ຮຽນຮູ້ເຖິງບັນຫາທີ່ໃຫ້ຜົນກະທົບ ຕໍ່ສຸຂະພາບຂອງເຂົາ ຮູ້ເຖິງຜົນທີ່ໄດ້ຮັບອັນບໍ່ດີໃນພຶດຕິກຳທີ່ຜ່ານມາ ພ້ອມທັງຮູ້ຈັດສ້າງແນວຄິດ ຫຼື ພຶດຕິກຳທີ່ດີ.

## ສະຫຼຸບ

ຈາກການສຶກສາຄັ້ງນີ້ພົບວ່າ ເດັກຍັງມີອັດຕາການເປັນພະຍາດແຂ້ວແມງສູງໂດຍສະເພາະໃນແຂ້ວຖາວອນ, ພຶດຕິກຳດ້ານການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງ ໃນພາບລວມຢູ່ລະດັບປານກາງ (2.79±0.55) ພົບວ່າ: ດ້ານການຖູແຂ້ວ ຄະແນນສະເລ່ຍລະດັບປານກາງ (2.03±0.62), ດ້ານການກວດສຸຂະພາບດ້ວຍຕົນເອງ ແລະ ການບໍລິໂພກອາຫານ ມີຄະແນນສະເລ່ຍລະດັບປານກາງ (2.04±0.54) ແລະ ດ້ານການໄປພົບທັນຕະແພດ ມີຄະແນນສະເລ່ຍລະດັບຕ່ຳ (1.83±0.58).

ຄວາມສຳພັນລະຫວ່າງ ຄວາມຮູ້ກ່ຽວກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວ ເພື່ອປ້ອງກັນພະຍາດແຂ້ວແມງ, ຄວາມຮັບຮູ້ກ່ຽວກັບ ພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງ, ການເຂົ້າເຖິງສະຖານການບໍລິການດ້ານທັນຕະກຳເພື່ອປ້ອງກັນພະຍາດແຂ້ວ, ການຮັບຮູ້ຂໍ້ມູນຂ່າວສານພະຍາດແຂ້ວ ແລະ ການສະໜັບສະໜູນທາງດ້ານສັງຄົມດ້ານການປ້ອງກັນພະຍາດແຂ້ວແມງ ມີຄວາມສຳພັນ ກັບພຶດຕິກຳການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວຂອງນັກຮຽນຊັ້ນປະຖົມ ປີທີ 5 ຂອງໂຮງຮຽນປະຖົມໂຊກປ່າຫຼວງ, ສີສັດຕະນາກ,ນະຄອນຫຼວງວຽງຈັນ ຢ່າງສຳຄັນທາງດ້ານສະຖິຕິ ລະດັບ 0.01

## ຂໍ້ສະເໜີແນະ

ຜົນການຄົ້ນຄວ້າຄັ້ງນີ້ ເປັນຂໍ້ມູນເບື້ອງຕົ້ນໃນການວາງແຜນການປ້ອງກັນພະຍາດແຂ້ວແມງ ຄວນມີການສ້າງແຜນ ຫຼື ວາງຍຸດທະສາດບົນພື້ນຖານຂໍ້ມູນທີ່ຄົ້ນຄວ້າມາໄດ້ ຄວນໃຫ້ມີໂຄງການ ຮັກສາສຸຂະພາບຜົ້ງປາກ ໃນໂຮງຮຽນຂັ້ນປະຖົມ ພ້ອມທັງສົ່ງເສີມສຸຂະສຶກສາໃຫ້ກັບຄູອາຈານ ແລະ ພໍ່ແມ່ຜູ້ປົກຄອງ ກ່ຽວກັບໂພຊະນາການ ການຈະເລີນເຕີບຂອງຮ່າງກາຍ ແລະ ສຸຂະພາບຜົ້ງປາກ-ແຂ້ວ. ການເຂົ້າເຖິງການບໍລິການທາງດ້ານທັນຕະກຳ ການນຳໃຊ້ຟລູອໍໄຣທາເຄືອບແຂ້ວ ເພື່ອປ້ອງກັນການເປັນພະຍາດແຂ້ວແມງເບື້ອງຕົ້ນ ຢ່າງມີແບບແຜນຢ່າງຕໍ່ເນື່ອງ ເພື່ອປ້ອງກັນ ແລະ ຫຼຸດອັດຕາການເປັນພະຍາດແຂ້ວແມງຂອງເດັກນັກຮຽນ.

## ຂໍ້ຂັດແຍ້ງ

ການສຶກສາຄັ້ງນີ້ແມ່ນໄດ້ຂຽນເອງ, ບໍ່ໄດ້ມີສ່ວນຮ່ວມກັບການໄດ້ເງິນ, ການຊື້ຈ້າງຕ່າງໆ ເຊິ່ງຈະຜິດຫຼັກຈັນຍາທຳທາງດ້ານການແພດ.

## ເອກະສານອ້າງອີງ

1. ສຸລິໂຍ ສຸວົງ (ຄສ 2023) "ສຶກສາສະພາບເສດຖະກິດສັງຄົມຂອງຜູ້ປົກຄອງ ທີ່ມີການພົວພັນກັບສະພາບແຂ້ວແມງໃນເດັກອະນຸບານ ແຂວງ ໄຊຍະບູລີ" ບົດວິທະຍານິພົນ ການສຶກສາໃນຫຼັກສູດປະລິນຍາໂທ ສາຂາເວຊະສາດ ປ້ອງກັນພະຍາດຊຶມເຊື້ອຜົ້ງປາກ ຄະນະທັນຕະແພດສາດ ມະຫາວິທະຍາໄລວິທະຍາສາດ ສຸຂະພາບ.

2. ສິນທິລາດ ບິລາກຸນ (ຄສ 2017) "ພຶດຕິກຳທີ່ມີຄວາມສຳພັນ ຕໍ່ການເກີດພະຍາດແຂ້ວແມງໃນເດັກ ອາຍຸ 12 ປີ ທີ່ ເມືອງສັງທອງ ນະຄອນຫຼວງວຽງຈັນ" ບົດວິທະຍານິພົນ ການສຶກສາໃນຫຼັກສູດປະລິນຍາໂທ ສາຂາເວຊະສາດ ປ້ອງກັນພະຍາດຊຶ່ມເຊື້ອຜົ້ງປາກ ຄະນະທັນຕະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ.

3. ສີວິໄຊ ພົມມະຫາໄຊ (ຄສ 2014)"ປັດໃນທີ່ພົວພັນເຖິງການເປັນພະຍາດແຂ້ວແມງໃນເດັກນັກຮຽນ ອາຍຸ 12 ປີ ໃນນະຄອນຫຼວງວຽງຈັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ບົດວິທະຍານິພົນ ການສຶກສາໃນຫຼັກສູດປະລິນຍາໂທ ສາຂາເວຊະສາດ ປ້ອງກັນພະຍາດຊຶ່ມເຊື້ອຜົ້ງປາກ ຄະນະທັນຕະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ.

4. ພົດສະບັນ ແສນສຸກ (2562) ໄດ້ສຶກສາ "ປັດໃຈທີ່ມີຄວາມສຳພັນຕໍ່ພຶດຕິກຳ ການເບິ່ງແຍງສຸຂະພາບແຂ້ວເພື່ອປ້ອງກັນແຂ້ວແມງ ຂອງນັກຮຽນຊັ້ນປະຖມປີທີ່ 6 ອຳເພີນົບພິຕຳ ແຂວງນະຄອນສີທຳມະຣາດ" ໂຄງການວິໄຈເພື່ອພັດທະນາງານສ້າງເສີມສຸຂະພາບຜົ້ງປາກ, ທັນຕະສາທາລະນາສຸກ ວິທະຍາໄລການສາທາລະນາສຸກ ສິຣິນທອນ ຈັງຫວັດຕຣັງ ປະເທດໄທ.

5. ສົມນາດ ທັບສິນວນ. 2549. "ປັດໃຈທີ່ມີຄວາມສຳພັນກັບພຶດຕິກຳການເບິ່ງແຍງ ສຸຂະພາບຜົ້ງປາກຂອງນັກຮຽນລະດັບມັດທະຍົມຕອນຕົ້ນ ໃນອຳເພີເມືອງ ຈັງຫວັດ ເພັດບູຣີ" ວິທະຍານິພົນວິທະຍາສາດມະຫາບັນດິດ, ສາຂາສຸຂະສຶກສາ ພາກວິຊາພົນສຶກສາ ມະຫາວິທະຍາໄລຣາດສະພັກ ເພັດບູຣີ ປະເທດໄທ.

6. ນັດທາວັດ ສຸວາຄອນ ແລະ ປຣະໂມດ ວົງສະຫວັດດີ 2561. "ປັດໃຈມີຜົນຕໍ່ພຶດຕິກຳການດູແລສຸຂະພາບແຂ້ວເພື່ອປ້ອງກັນພະຍາດແຂ້ວແມງຂອງນັກຮຽນຊັ້ນປະຖມປີທີ່ 6 ອຳເພີເມືອງ ຈັງວັດພິດສະນຸໂລກ" ວິທະຍານິພົນປະລິນຍາສາທາລະນາສຸກສາດບັນດິດ, ບັນດິວິທະຍາໄລ ມະຫາວິທະຍາໄລນາເຣສວນ

7. ສຸພັດໄຊ ຍິນດີຍຸດ. 2552 "ພຶດຕິກຳດ້ານທັນຕະສຸຂະພາບ ຂອງນັກຮຽນຊັ້ນປະຖົມສຶກປີທີ່ 6 ໃນເຂດຕຳບົນນິຄົມກະສຽວ ອຳເພີດ້ານຊ້າງ ຈັງຫວັດສຸພັນບູຣີ" ລາຍງານວິໃຈ. ມະຫາສາລະຄາມ: ມະຫາວິທະຍາໄລ ມະຫາສາລະຄາມ.

8. ສຳນັກທັນຕະສາທາລະນາສຸກ ກົມອານາໄມ ກະຊວງສາທາລະນາສຸກ. 2560. ລາຍງານການສຳຫຼວດສະພາວະ ທັນຕະສຸຂະພາບແຫ່ງຊາດຄັ້ງທີ່ 8 ປະເທດໄທ ພ.ສ. 2560. ພີມຄັ້ງທີ່ 1 ກຸງເທບມະຫານະຄອນ: ສາມຈະເລີນພານິດ.

9. ວິທະຍາ ໂພທະສິນ. 2549. ປັດໃຈມີຜົນຕໍ່ພຶດຕິກຳສຸຂະພາບຜົ້ງປາກເດັກນັກຮຽນ ປະຖົມສຶກສາ ຊັ້ນປີ 4-6 ຂອງອຳເພີສາມຮ້ອຍຍອດ ຈັງຫວັດປະຈວບສີຣີຂັນ 13(4), 16.

# Factors Associated with Dental Health Care Behaviors For Dental Caries Prevention of Grade 5 students, Sisattanak district, Vientiane Capital

Vinath Phommakone[1], Phonesavanh Suondala[1], Vorasack Phounsiri[1], Johnny Sisounthone[2], Souliyo Souvong[1], Manivone Phanthavong[1]

1. Faculty of Dentistry, University of Health Sciences, Vientiane Capital, Lao PDR
2. Administration Cabinet, University of Health Sciences, Vientiane Capital, Lao PDR

Received 12 November 2023; received in revised form 9 September 2024; accepted for publication 15 October 2024

## Abstract

**Background and rationale**: Sok Pa Luang Primary School is one of the schools located in the big city and It is also a model school that lies in the promotion program and Prevention of childhood diseases as a program or planning in schools and Oral-dental health care program of the Faculty of Dentistry, University of Health has given health education to  Sok Pra Luang Primary School, Si Sattanak District make aware of various behaviors which is the risk of tooth decay in children 10-12 years old this is an important issue and there is no survey yet. Since the school dental program, the Faculty of Dentistry has been operating for many years, The pediatric dentistry team is interested Study the factors that are related to oral health behavior, To prevent tooth decay in 5th grade students.

**Methodology:** This study model is a cross-sectional survey research, Send the interview form to the student's parents, Student interview form and oral examination carries. Tools used in research using the preceding framework. Sample population: The total  number included in the study was 72 student who is studying Primary education grade 5, Sok Pa Luang Primary School Si Sattanak District, Vientiane Province. 2022-2023.

**Results:** The incidence of tooth decay in permanent teeth is 72 people: 29 people didn't find any carious teeth, Males without teeth are higher than females at 62.1% and a total of 43 people were found to have carious teeth and Females are 58.1% higher than males. Dental health care behaviors to prevent dental caries in the overall at a moderate (2.79±0.55), The relationship between sex, parent's age, the person the child lives with, the number of members in the student's family, the parent's occupation, the parent's education level, the average monthly income of the family and the amount of money the student comes to school with the behavior of taking care of dental health to prevent tooth decay. There is no relationship with the behavior of taking care of dental health to prevent tooth decay of students. Knowledge, Awareness about behavior dental health care to prevent tooth decay, Access to dental services, Dental caries information awareness and social support for dental caries prevention there is a positive relationship with dental health care behavior to prevent dental carries in students (p-value = 0.01).

**Conclusion:** The incidence of tooth decay in students is 59.5%, It is considered that it is still very high that attention should be given to dental hygiene in many aspects and starting from the 1st grade so that students know and understand how to prevent tooth decay.

**Copyright:** © 2024 Vinath *et al*. This is an open-access article distributed under the terms of the Creative Commons Attribution Licence, which permits unrestricted use, distribution, and reproduction in any medium, provided the original author and source are credited.

**Keywords:** unintentional injuries, elderly people, Sumneua district, Aid district, Huaphan province, risk factor of unintentional injuries

***Corresponding author:**  Vinath Phommakone, Tel: +85620 7771 2621, E-mail: phvinath@gmail.com